# ຄວາມສຳຄັນຂອງສົນທິສັນຍາຕ້ານການສໍ້ລາດບັງຫລວງ

*(ຂປລ):ອົງການກວດກາລັດຖະບານຮ່ວມກັບກະຊວງການຕ່າງປະເທດ ແລະ ອົງການສະຫະປະຊາຊາດເພື່ອການພັດທະນາປະຈຳ ສປປ ລາວ ໄດ້ຈັດກອງປະຊຸມສຳມະນາພາຍໃຕ້ຫົວຂໍ້(ສົນທິສັນຍາ ສປຊ ຕ້ານການສໍ້ລາດບັງຫລວງ ແລະ ການນຳສະເໜີບົດລາຍງານພັດທະນາຊັບພະຍາກອນມະນຸດສຳລັບພາກພື້ນອາຊີ-ປາຊີຟິກຊຶ່ງການສຳມະນາຄັ້ງນີ້ຈັດຂຶ້ນໃນວັນທີ 11-12 ກັນຍາ 2008 ໂດຍການເປັນປະທານຂອງ ທ່ານ ບຸນປອນ ສັງສົມສັກ, ກຳມະການໃນຄະນະກຳມະການກວດກາສູນກາງແລະອົງການກວດກາລັດຖະບານ, ທ່ານນາງ ໂຊນາມ ຢາງເຈັນ ຣາມາ, ຜູ້ປະສານງານອົງການສະຫະປະຊາຊາດເພື່ອການພັດທະນາປະຈຳລາວ, ມີບັນດາ ສະມາຊິກສະພາແຫ່ງຊາດ, ຕາງໜ້າກະຊວງ, ອົງການທຽບເທົ່າ ແລະ ສຳນັກງານອົງການຈັດຕັ້ງຕ່າງໆພ້ອມທັງຜູ້ຕາງໜ້າອົງການຈັດຕັ້ງສາກົນປະຈຳລາວເຂົ້າຮ່ວມ 100 ກວ່າທ່ານ.

ເປົ້າໝາຍສຳຄັນແມ່ນໄດ້ມີການສຶກສາກ່ຽວກັບເນື້ອໃນສົນທິສັນຍາ ສປຊ ຕ້ານການສໍ້ລາດບັງຫລວງ, ☞ອ່ານຕໍ່ໜ້າ 2

( ປະເທດລາວ, ວັນທີ 12 ກັນຍາ 2008 )



ຄວາມສຳຄັນ...

ມີກສາ ແລະ ສົມທຽບສົນທິ ສັນຍາດັ່ງກ່າວກັບກົດໝາຍ ແລະ ກົນໄກຕ້ານການສໍ້ລາດບັງຫລວງຂອງ ສປປ ລາວ ທີ່ມີຢູ່ໃນປະຈຸບັນ ແລະ ຕີລາຄາເຖິງຄວາມເປັນໄປໄດ້ໃນການທີ່ຈະສະເໜີຕໍ່ລັດຖະບານ ແລະ ສະ ພາແຫ່ງຊາດພິຈາລະນາໃຫ້ສັດຕະຍາບັນຕໍ່ສົນທິສັນຍາສະບັບນີ້ໃນອະນາຄົດ.

ທ່ານ ບຸນປອນ ສັງສົມສັກ ໄດ້ກ່າວເນັ້ນເຖິງ ຄວາມສຳຄັນຂອງສົນທິສັນຍາ ສປຊ ວ່າດ້ວຍການຕ້ານການສໍ້ລາດບັງຫລວງຊຶ່ງເປັນບ່ອນອີງທາງດ້ານກົດໝາຍສຳຄັນສຳລັບການຮ່ວມມືສາກົນໃນການຕ້ານ ແລະກຳຈັດການສໍ້ລາດບັງຫລວງໃນໂລກ. ສປປ ລາວ ລົງນາມໃນສົນທິສັນຍາສະບັບນີ້ໃນປີ 2003 ແລະນັບແຕ່ນັ້ນມາໄດ້ມີການກະກຽມຄວາມພ້ອມດ້ານຕ່າງໆ ເພື່ອການໃຫ້ສັດຕະຍາບັນ ໂດຍໄດ້ຮັບການຮ່ວມມືຈາກບັນດາອົງການຈັດຕັ້ງສາກົນ, ສປປ ລາວ ໄດ້ຈັດຕັ້ງກອງປະຊຸມສຳມະນາ ແລະ ສະເຫຼີມສະຫລອງວັນສາກົນຕ້ານການສໍ້ລາດບັງຫລວງໃນລະດັບຕ່າງໆນັບແຕ່ສູນກາງຮອດຮາກຖານ ອັນໄດ້ຍົກສູງຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບການດຳເນີນການຕ້ານການສໍ້ລາດບັງຫລວງໃນລະດັບສາກົນ ແລະ ຢູ່ພາຍໃນປະເທດ, ຊ່ວຍປູກຈິດສຳນຶກຂອງພະນັກງານ ແລະ ປະຊາຊົນ ທີ່ສອດຄ່ອງກັບກົດໝາຍຕ້ານການສໍ້ລາດບັງຫລວງຂອງລາວ ເຊິ່ງຖືກຮັບຮອງເອົາໂດຍສະພາແຫ່ງຊາດໃນປີ 2005.

ທ່ານນາງ ໂຊນາມ ຢາງເຈັນ ຣາມາ ໄດ້ກ່າວເຖິງຄວາມໝາຍສຳຄັນຂອງການຈັດການສຳມະ ນາຄັ້ງນີ້ພ້ອມທັງຕີລາຄາສູງຄວາມພະຍາຍາມຂອງລັດຖະບານ ແຫ່ງ ສປປ ລາວໃນການຕໍ່ສູ້ຕ້ານການສໍ້ລາດບັງຫລວງ ຊຶ່ງເປັນການປະກອບສ່ວນຢ່າງຕັ້ງໜ້າ ຮ່ວມກັບວົງຄະນາຍາດສາກົນ ໂດຍສະເພາະແມ່ນການສຶກສາຄົ້ນຄວ້າສົນທິສັນຍາ ດັ່ງກ່າວທີ່ມີຜົນທາງກົດໝາຍ, ເປັນເຄື່ອງມືທີ່ສຳຄັນໃຫ້ແກ່ປະເທດຕ່າງໆໃນການຮ່ວມກັນຕ້ານການສໍ້ລາດບັງຫລວງທີ່ເປັນອຸປະສັກຕໍ່ການຮ່ວມມືພັດທະນາສາກົນ.

ທ່ານນາງ ໂຊນາມ ຢາງເຈັນ ຣາມາ ຍັງໄດ້ຍົກໃຫ້ເຫັນ ເຖິງຄວາມສຳຄັນຂອງບົດລາຍງານພັດທະນາມະນຸດສຳລັບພາກພື້ນອາຊີ ແລະ ປາຊີຟິກຂອງອົງການສະຫະປະຊາຊາດເພື່ອການພັດທະນາ ເຊິ່ງບົດລາຍງານດັ່ງກ່າວໄດ້ເນັ້ນເຖິງການພົວພັນ ແລະ ຜົນກະທົບຂອງການສໍ້ລາດບັງຫລວງຕໍ່ການພັດທະນາບັນດາຂະແໜງການໃນພາກພື້ນອາຊີ-ປາຊີຟິກ./.ຂ່າວວັນ